ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1364/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 28 ກັນຍາ 2018

# ຄຳສັ່ງ
## ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ
## ວ່າດ້ວຍການຢຸດຕິການອອກໃບອະນຸຍາດນຳເຂົ້າ ເຫຼັກ ແລະ ຊີມັງ

ເຖິງ: - ຫ້ອງການ, ບັນດາກົມ ແລະ ສະຖາບັນ ພາຍໃນກະຊວງອຸດສາຫະກຳ ແລະ ການຄ້າ
- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

– ອີງຕາມດຳລັດ ເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ.
– ອີງຕາມຄຳສັ່ງ ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ໃນ ສປປ ລາວ.

ເພື່ອເປັນການຜັນຂະຫຍາຍເນື້ອໃນຂອງຄຳສັ່ງນາຍົກລັດຖະມົນຕີ ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ໃນ ສປປ ລາວ, ໂດຍສະເພາະຕົວຊີ້ວັດທີ 08 ການຄ້າຂ້າມແດນທີ່ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການໃນການຈັດຕັ້ງປະຕິບັດໃຫ້ມີຄວາມສະດວກ, ວ່ອງໄວ ແລະ ຫຼຸດຜ່ອນບັນດາຂັ້ນຂອດ, ເອກະສານທີ່ບໍ່ຈຳເປັນລົງ.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງ:

1) ໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຢຸດຕິການອອກໃບອະນຸຍາດນຳເຂົ້າ ເຫຼັກ ແລະ ຊີມັງ ທີ່ພະແນກເປັນຜູ້ຄຸ້ມຄອງອອກອະນຸຍາດ ຕາມຂໍ້ຕົກລົງ ເລກທີ 0450/ອຄ.ກຂອ, ລົງວັນທີ 01 ມີນາ 2012.
2) ການນຳເຂົ້າ ແລະ ສົ່ງອອກ ເຫຼັກ ແລະ ຊີມັງ ໃຫ້ດຳເນີນຕາມຂັ້ນຕອນການແຈ້ງພາສີຢູ່ດ່ານໄດ້ເລີຍ, ແຕ່ຕ້ອງປະຕິບັດໃຫ້ສອດຄ່ອງກັບລະບຽບການທາງດ້ານເຕັກນິກທີ່ຂະແໜງການກ່ຽວຂ້ອງຂອງ ສປປ ລາວ ຫຼື ປະເທດປາຍທາງກຳນົດໄວ້ ຄື:
   2.1. ສອດຄ່ອງກັບມາດຕະຖານແຫ່ງຊາດກ່ຽວກັບຜະລິດຕະພັນ ເຊັ່ນ: ມາດຕະຖານການຜະລິດ, ມາດຕະຖານຜະລິດຕະພັນແຫ່ງຊາດລາວ, ມາດຕະຖານການຫຸ້ມຫໍ່, ການຕິດສະຫຼາກ ເປັນຕົ້ນ;
   2.2. ຊີມັງ ທີ່ນຳເຂົ້າມາຈຳໜ່າຍຢູ່ ສປປ ລາວ ຕ້ອງໄດ້ຜ່ານການຫຸ້ມຫໍ່ ແລະ ຕິດສະຫຼາກສິນຄ້າ ໃຫ້ສອດຄ່ອງກັບ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍການຄຸ້ມຄອງສິນຄ້າຫຸ້ມຫໍ່ ຢູ່ ສປປ ລາວ (ສະບັບປັບປຸງ) ເລກທີ 0542/ກວຕ, ລົງວັນທີ 16 ພຶດສະພາ 2017

ແລະ ຄໍາສັ່ງຂອງ ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ກ່ຽວກັບການຕິດສະຫຼາກສິນຄ້າເປັນພາສາລາວ ເລກທີ 2501/ອຄ.ຄພນ ລົງວັນທີ 16 ທັນວາ 2015;

2.3. ການນໍາເຂົ້າ ຫຼື ສົ່ງອອກ ເຫຼັກ ແລະ ຊີມັງ ຕ້ອງຜ່ານດ່ານສາກົນ ເທົ່ານັ້ນ.

3) ໃຫ້ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນເຈົ້າການຄຸ້ມຄອງ ແລະ ອອກໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ, ສົ່ງອອກ, ຜະລິດ ແລະ ຈໍາໜ່າຍ ເຫຼັກ ແລະ ຊີມັງ ຕາມກໍລະນີດັ່ງນີ້:

3.1 ໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ ແລະ ສົ່ງອອກ ວັດສະດຸກໍ່ສ້າງ ແລະ ອຸປະກອນຮັບໃຊ້ເພື່ອການກໍ່ສ້າງ ຊຶ່ງລວມທັງ ເຫຼັກ ແລະ ຊີມັງ ເພື່ອມາຈໍາໜ່າຍທົ່ວໄປ ແມ່ນອອກໂດຍຂະແໜງນໍາເຂົ້າ ແລະ ສົ່ງອອກ;

3.2 ໃບອະນຸຍາດດໍາເນີນທຸລະກິດອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ສໍາລັບບັນດາໂຮງງານຜະລິດ ເຫຼັກ ແລະ ຊີມັງ ແມ່ນອອກໂດຍຂະແໜງອຸດສາຫະກໍາ ແລະ ຫັດຖະກໍາ;

3.3 ໃບອະນຸຍາດດໍາເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ວັດສະດຸກໍ່ສ້າງ ແລະ ອຸປະກອນຮັບໃຊ້ເພື່ອການກໍ່ສ້າງ ຊຶ່ງລວມທັງ ເຫຼັກ ແລະ ຊີມັງ ແມ່ນອອກໂດຍຂະແໜງການຄ້າພາຍໃນ.

3.4 ສໍາລັບວິສາຫະກິດທີ່ໄດ້ຮັບການຂຶ້ນທະບຽນສ້າງຕັ້ງມາກ່ອນແລ້ວແມ່ນສາມາດສືບຕໍ່ດໍາເນີນກິດຈະການໄດ້ເລີຍ ໂດຍໃຫ້ຖືເອົາໃບທະບຽນວິສາຫະກິດສະບັບເດີມ.

3.5 ວິສາຫະກິດໃດມີຈຸດປະສົງດໍາເນີນກິດຈະການໃນຂໍ້ 3.1, 3.2 ແລະ 3.3 ທີ່ໄດ້ກ່າວມາຂ້າງເທິງ ຫຼັງເລີ້ມຈັດຕັ້ງປະຕິບັດນະໂຍບາຍໃໝ່ ກ່ຽວກັບ ການຂຶ້ນທະບຽນສ້າງຕັ້ງວິສາຫະກິດ ຕາມຄໍາສັ່ງ ເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018 ແມ່ນໃຫ້ປະຕິບັດຕາມຂັ້ນຕອນທີ່ ກະຊວງອຸດສາຫະກໍາ ແລະ ການຄ້າ ກໍານົດໄວ້ໃນລະບຽບການຕ່າງຫາກ.

4) ໃຫ້ ກົມການຄ້າພາຍໃນ, ພະແນກ ອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຊີ້ນໍາ ອົງການປະຕິບັດວຽກງານກວດກາການຄ້າ ແຕ່ລະຂັ້ນ ລົງຕິດຕາມກວດກາ ຕາມພາລະບົດບາດ. ຖ້າພົບເຫັນການລະເມີດ ແມ່ນໃຫ້ປະຕິບັດຕາມທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງວ່າດ້ວຍ ການປະຕິບັດວຽກງານກວດກາການຄ້າ ເລກທີ 1499/ອຄ.ກຄພນ, ລົງວັນທີ 08 ກັນຍາ 2017.

5) ໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ, ກົມການຄ້າພາຍໃນ ແລະ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນເຈົ້າການສົມທົບບັນດາຂະແໜງການກ່ຽວຂ້ອງທີ່ປິ່ນອ້ອມ ແລະ ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ ເຜີຍແຜ່, ສ້າງຄວາມເຂົ້າໃຈ ໃຫ້ແກ່ບັນດາເຈົ້າໜ້າທີ່ພາກລັດ ແລະ ຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງ ໃຫ້ສາມາດຈັດຕັ້ງຢ່າງເປັນເອກະພາບ.

6) ຄໍາສັ່ງ ສະບັບນີ້ ແມ່ນໃຫ້ເລີ້ມຈັດຕັ້ງປະຕິບັດ ແຕ່ວັນທີ 01 ມັງກອນ 2019 ເປັນຕົ້ນໄປ.

7) ຄໍາສັ່ງສະບັບນີ້ມີຜົນສັກສິດພາຍລົງລາຍເຊັນ ແລະ ພິມລົງໃນຈົດໝາຍເຫດທາງລັດຖະການ 15 ວັນ. ຄໍາສັ່ງສະບັບນີ້ປ່ຽນແທນ ຂໍ້ຕົກລົງ ເລກທີ 0450/ອຄ.ກຂອ, ລົງວັນທີ 01 ມີນາ 2012. ຂໍ້ຕົກລົງ, ຄໍາແນະນໍາ ຫຼື ຄໍາສັ່ງໃດ ທີ່ມີເນື້ອໃນຂັດກັບຄໍາສັ່ງສະບັບນີ້ ລ້ວນແລ້ວແຕ່ຖືກລົບລ້າງ.

**ລັດຖະມົນຕີ,**

ມ.ເຂັມມະນີ ພົນເສນາ